ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 20 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 05/11/24

# ຄໍາສັ່ງ

## ວ່າດ້ວຍການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

ເຖິງ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ວ່າດ້ວຍພິຈາລະນາຮັບຮອງ ການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້;
- ອີງຕາມ ເອກະສານລາຍງານ ຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 2618/ກຊສ, ລົງວັນທີ 20 ກັນຍາ 2024.

ເພື່ອເປັນການສືບຕໍ່ຜັນຂະຫຍາຍ ເນື້ອໃນມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ ວ່າດ້ວຍພິຈາລະນາຮັບຮອງ ການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້, ພ້ອມທັງ ເປັນບ່ອນອີງ ແລະ ເງື່ອນໄຂທີ່ສໍາຄັນ ໃຫ້ທຸກຂະແໜງການຍູ້ແຮງດ້ານການພັດທະນາເຂົ້າສູ່ລວງເລິກໃນການນໍາພາ-ຊີ້ນໍາ ໂດຍສະເພາະ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂົງເຂດວຽກງານຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ເປັນເງື່ອນໄຂຈັດຕັ້ງປະຕິບັດໃນຕໍ່ໜ້າຂອງຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ແນໃສ່ຮັບປະກັນໃຫ້ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ໃຫ້ມີຄວາມຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ:

1. ໃຫ້ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເພີ່ມທະວີ ແລະ ເອົາໃຈໃສ່ປະຕິບັດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ເຂົ້າໃນການຜັນຂະຫຍາຍເນື້ອໃນມະຕິຂອງຄະນະປະຈໍາສະພາແຫ່ງຊາດ ວ່າດ້ວຍ ພິຈາລະນາຮັບຮອງການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ໂດຍຖືເອົາວຽກດັ່ງກ່າວ ເປັນໜ້າທີ່ການເມືອງ, ເປັນຕົວຊີ້ວັດ ຕໍ່ຜົນໄດ້ ຜົນເສຍ ໃນການນໍາພາ-ຊີ້ນໍາ ຂອງອົງການປົກຄອງທຸກຂັ້ນ.
2. ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບ ກະຊວງກະສິກໍາ ແລະ ປ່າໄມ້, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການ ດັ່ງນີ້:

1.) ການຂຶ້ນທະບຽນອອກໃບຕາດິນ ໃນເຂດທີ່ດິນປ່າໄມ້ (ໃນຂອບເຂດ 3 ປະເພດປ່າ: ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ) ໃຫ້ປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດ ກ່ອນການສ້າງຕັ້ງເຂດທີ່ດິນປ່າໄມ້ດັ່ງກ່າວ ຕ້ອງມີການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນຄືນໃໝ່ ໂດຍມີແຜນຈັດສັນທີ່ດິນທ້ອງຖິ່ນ;

2.) ການຂຶ້ນທະບຽນອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃນເຂດທີ່ດິນປ່າໄມ້ ໃນຂອບເຂດ 3 ປະເພດປ່າ (ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ) ແມ່ນມີກຳນົດໄລຍະເວລາບໍ່ເກີນ 50 ປີ ໃຫ້ປະຊາຊົນ ທີ່ອາໄສ ແລະ ທຳການຜະລິດ ໃນເຂດທີ່ດິນປ່າໄມ້ ພາຍຫຼັງການກຳນົດເປັນເຂດທີ່ດິນປ່າໄມ້ ຕາມຜົນການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນຄືນໃໝ່ ໂດຍມີແຜນຈັດສັນທີ່ດິນທ້ອງຖິ່ນ ແລະ ມີການກວດກາ, ຕິດຕາມ ແລະ ປະເມີນຜົນການນຳໃຊ້ທີ່ດິນ ແລະ ສາມາດຕໍ່ອາຍຸໄດ້;

3.) ການຊື້ຂາຍສິດນຳໃຊ້ທີ່ດິນ ທີ່ມີໃບຕາດິນ ແມ່ນໃຫ້ດຳເນີນຕາມກົດໝາຍ ວ່າດ້ວຍທີ່ດິນ ແລະ ລະບຽບການທີ່ກ່ຽວຂ້ອງວາງອອກ ຢ່າງເຂັ້ມງວດ, ສຳລັບສິດນຳໃຊ້ທີ່ດິນ ທີ່ມີໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃນເຂດທີ່ດິນປ່າໄມ້ ແມ່ນບໍ່ສາມາດຂາຍ, ມອບ, ຍົກ ຫຼື ແລກປ່ຽນສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ, ໃຫ້ບຸກຄົນອື່ນເຊົ່າ ແລະ ຄ້ຳປະກັນ, ແຕ່ສາມາດສືບທອດຕາມສາຍຍາດໄດ້, ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ໄດ້ອາໄສ ແລະ ທຳການຜະລິດ ໃນເຂດທີ່ດິນປ່າໄມ້ດັ່ງກ່າວ ແມ່ນສາມາດສະເໜີເຊົ່າ ແລະ ສຳປະທານທີ່ດິນ ໃນເຂດທີ່ດິນປ່າໄມ້ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ;

4.) ການນຳໃຊ້ທີ່ດິນ ທີ່ໄດ້ອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃນເຂດທີ່ດິນປ່າໄມ້ ຕ້ອງນຳໃຊ້ຕາມເງື່ອນໄຂ ທີ່ກຳນົດໄວ້ໃນໃບຢັ້ງຢືນດັ່ງກ່າວຢ່າງເຂັ້ມງວດ, ໃນກໍລະນີ ມີການລະເມີດ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ໃຫ້ດຳເນີນການຖອນສິດ (ໃບຢັ້ງຢືນ) ນຳໃຊ້ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 144 ແລະ 145 ຂອງກົດໝາຍ ວ່າດ້ວຍທີ່ດິນ ແລະ ລະບຽບການກ່ຽວຂ້ອງ ໂດຍມອບໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຜູ້ກວດກາ, ຕິດຕາມ ແລະ ຢັ້ງຢືນ ສະເໜີຫາຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສະເໜີຫາອົງການປົກຄອງຂັ້ນແຂວງ ພິຈາລະນາຖອນສິດນຳໃຊ້ທີ່ດິນ;

5.) ເລັ່ງທົບທວນຄືນ ແຜນຈັດສັນທີ່ດິນທ້ອງຖິ່ນ ໃນໄລຍະຜ່ານມາ ແລະ ສ້າງແຜນຈັດສັນທີ່ດິນທ້ອງຖິ່ນ ໃນເຂດທີ່ບໍ່ທັນໄດ້ຈັດສັນທີ່ດິນໃຫ້ສຳເລັດຕາມແຜນການທີ່ໄດ້ກຳນົດໄວ້ ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030.

3. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການ ດັ່ງນີ້:

1.) ຮີບຮ້ອນດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນທີ່ດິນປ່າໄມ້ຄືນໃໝ່ ເພື່ອວາງແຜນການຄຸ້ມຄອງທີ່ດິນປ່າໄມ້ ເພື່ອເປັນເງື່ອນໄຂໃຫ້ແກ່ການອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້, ການສ້າງສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ພ້ອມທັງ ດຳເນີນການດັດແກ້ຂອບເຂດທີ່ດິນປ່າໄມ້ ໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນທ້ອງຖິ່ນ ເພື່ອນຳສະເໜີລັດຖະບານ ພິຈາລະນາຮັບຮອງທີ່ດິນປ່າໄມ້ຄືນໃໝ່ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2.) ກຳນົດ ໄລຍະເວລາ ແລະ ເນື້ອທີ່ ບໍ່ເກີນ 20 ເຮັກຕາ ຕໍ່ຄອບຄົວ ແລະ ເນື້ອໃນສັນຍາການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນກະສິກຳ ທີ່ຈະຂຶ້ນທະບຽນອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ແລະ ສັນຍາການຄຸ້ມຄອງ ແລະ ປົກປັກຮັກສາ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນການນຳໃຊ້ທີ່

ດິນ ຂອງຂະແໜງກະສິກຳ ແລະ ປ່າໄມ້, ຈຸດພິເສດທາງດ້ານພູມສັນຖານ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມໜາແໜ້ນຂອງພົນລະເມືອງ.

4. ມອບໃຫ້ອົງການປົກຄອງທ້ອງຖິ່ນ ດຳເນີນການ ດັ່ງນີ້:
   1.) ຊີ້ນຳ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຂັ້ນເມືອງ ດຳເນີນການຂຶ້ນທະບຽນອອກໃບຕາດິນກະສິກຳ (ດິນນາ, ດິນສວນ), ດິນປຸກສ້າງ ທີ່ເປັນທີ່ຢູ່ອາໄສ ໃຫ້ແກ່ປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດ ໃນຂອບເຂດ 3 ປະເພດປ່າ ຕາມກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ວ່າດ້ວຍ ພິຈາລະນາຮັບຮອງການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໂດຍໃຫ້ສອດຄ່ອງກັບແຜນຈັດສັນທີ່ດິນທ້ອງຖິ່ນ;
   2.) ດຳເນີນການອອກໃບຢັ້ງຢືນນຳໃຊ້ທີ່ດິນປ່າໄມ້ ແລະ ສັນຍາຄຸ້ມຄອງ ແລະ ປົກປັກຮັກສາ ສຳລັບຕອນດິນ ທີ່ປະຊາຊົນໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ໃນ 3 ປະເພດປ່າ ພາຍຫຼັງການກຳນົດເປັນເຂດທີ່ດິນປ່າໄມ້ ໃນ 3 ປະເພດປ່າ ບົນພື້ນຖານການຈັດສັນທີ່ດິນຄືນໃໝ່ໃນເຂດທີ່ດິນປ່າໄມ້;
   3.) ປະສານສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສະຫຼຸບລາຍງານ ການຂຶ້ນທະບຽນອອກໃບຕາດິນ, ກວດກາ ແລະ ກຳນົດເນື້ອທີ່ດິນໃນເຂດປ່າໄມ້ ທີ່ຈະຕັດອອກຈາກເຂດທີ່ດິນປ່າໄມ້ ແລ້ວສະເໜີສະພາປະຊາຊົນແຂວງ ແລະ ນະຄອນຫຼວງ ພິຈາລະນາຢັ້ງຢືນກ່ອນນຳສະເໜີລັດຖະບານ ພິຈາລະນາຮັບຮອງທີ່ດິນປ່າໄມ້ຄືນໃໝ່ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

5. ງົບປະມານ ນຳໃຊ້ເຂົ້າໃນການຈັດສັນທີ່ດິນ ແລະ ການຂຶ້ນທະບຽນອອກໃບຕາດິນ ແລະ ການອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ແມ່ນໃຫ້ນຳໃຊ້ງົບປະມານລາຍຮັບວິຊາການ ຂອງແຕ່ລະທ້ອງຖິ່ນ ແລະ ງົບປະມານຈາກການຊ່ວຍເຫຼືອ ເພື່ອການພັດທະນາ ຕາມສະພາບເອື້ອອຳນວຍ.

6. ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຈົ່ງຮັບຮູ້ ແລະ ຄົ້ນຄວ້າເກົາແໜ້ນຄຳສັ່ງສະບັບນີ້ ເພື່ອຜັນຂະຫຍາຍອອກເປັນໜ້າວຽກລະອຽດຂອງຕົນໂດຍໄວ, ພ້ອມທັງ ຈັດຕັ້ງເຜີຍແຜ່ ແລະ ເຊື່ອມຊຶມ ໃຫ້ສັງຄົມຮັບຮູ້, ເຂົ້າໃຈຢ່າງຖືກຕ້ອງ ແລະ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ, ໃນກໍລະນີ ຂະແໜງການໃດ, ທ້ອງຖິ່ນໃດ ຫາກລະເມີດຕໍ່ຄຳສັ່ງສະບັບນີ້, ຄະນະນຳຂອງຂະແໜງການ ຫຼື ທ້ອງຖິ່ນນັ້ນ ຕ້ອງຮັບຜິດຊອບຕໍ່ກົດໝາຍທີ່ກ່ຽວຂ້ອງ.

7. ຄຳສັ່ງ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**